# ໜັງສືເອເຟດ

ໃຈຄວາມສຳຄັນ    ຂຶ້ນໄປຟ້າສວັນໄດ້ດ້ວຍອົງພຣະຄຣິດ

ຈຳນວນບົດ    ໖ ບົດ

## ຄຳນຳ

ໜັງສືເອເຟດເປັນໜັງສືທີ່ວ່າດ້ວຍຄຣິສຕະຈັກ ແລະເປັນໜັງສືທີ່ມີເນື້ອຄວາມຄ້າຍ ໆ ກັນກັບໜັງສືໂກໂລດ ຄືໃນໜັງສືເອເຟດທ່ານໂປໂລບອກສະພາບຂອງເຮົາໃນອົງພຣະຄຣິດ ແລະໃນໜັງສືໂກໂລດກໍບອກວ່າສະພາບຂອງພຣະຄຣິດໃນເຮົາ

## ວ່າດ້ວຍເວລາທີ່ຂຽນ

ໜັງສືນີ້ ທ່ານໂປໂລໄດ້ຂຽນ ເມື່ອ ຖືກຂັງ ຢູ່ໃນຄຸກ ເພາະເຫັນແກ່ພຣະນາມຂອງພຣະເຢຊູຄຣິດ ໜັງສືທີ່ເພິ່ນຂຽນໃນເວລາຖືກຂັງນັ້ນມີຢູ່ສີ່ສະບັບຄື: ໜັງສືເອເຟດ, ຟີລິບ, ໂກໂລດ ແລະຟີເລໂມນ ຕາມພຣະຄັມພີໄດ້ບອກວ່າ ທ່ານໂປໂລຖືກຂັງຢູ່ສອງບ່ອນ ຄືທີ່ເມືອງກາຍຊາເຣັຍສອງປີ ແລະທີ່ກຸງໂຣມສອງປີ (ກິຈການ ໒໘:໑໖, ໓໐–໓໑) ພວກເຮົາຄິດວ່າໜັງສືນີ້ໄດ້ຂຽນເມື່ອເວລາຖືກຂັງຢູ່ກຸງໂຣມປີ ຄ.ສ. ໖໒ ເພາະໃນເວລາຖືກຂັງຢູ່ກຸງໂຣມ ເພິ່ນຍັງມີສິດມີໂອກາດປ່າວປະກາດ ແລະມີໂອກາດບົວຣະບັດພຣະເຈົ້າດ້ວຍ (ກິຈການ ໒໘:໓໐–໓໑; ເອເຟດ ໖:໑໙–໒໐) ຜູ້ຮັບສົ່ງໜັງສືໃຫ້ເພິ່ນແມ່ນທ່ານຕີຊີໂກ (໖:໒໑)

## ວ່າດ້ວຍຜູ້ຮັບໜັງສື

ຕົ້ນສະບັບເດີມສອງສະບັບບໍ່ໄດ້ບອກວ່າ "ທີ່ເມືອງເອເຟດ" ແຕ່ເປັນຄຳທີ່ຂຽນຕື່ມໃສ່ໃນພາຍຫລັງ ເພາະທ່ານໂປໂລບໍ່ພຽງແຕ່ຢາກຝາກໜັງສືນີ້ໃຫ້ແກ່ຄຣິສຕະຈັກທີ່ເມືອງເອເຟດເທົ່ານັ້ນ ແຕ່ຢາກຝາກໄປເຖິງທຸກໆ ຄຣິສຕະຈັກທີ່ຢູ່ໃນແຂວງນັ້ນ ຄືບັນດາໜ່ວຍຄຣິສຕະຈັກທັງເຈັດທີ່ບອກໄວ້ໃນຄຳປາກົດບົດ ໒–໓

ພວກເຮົາຮູ້ວ່າ ທ່ານໂປໂລໄດ້ຢູ່ເມືອງເອເຟດເຖິງສາມປີ (ກິຈະການ ໒໐:໓໑) ແລ້ວໄດ້ຕັ້ງຄຣິສຕະຈັກໜ່ວຍນີ້ກັບໜ່ວຍອື່ນໆ ອີກໄວ້ໃນແຂວງນີ້ ສະນັ້ນພວກຄຣູສອນສ່ວນຫລາຍຈຶ່ງຄິດວ່າ ໜັງສືນີ້ໄດ້ຂຽນໄປຍັງໜ່ວຍຄຣິສຕະຈັກທີ່ເປັນສູນກາງຢູ່ເມືອງເອເຟດ ເພື່ອໃຫ້ເພີ່ນຂຽນກ່າຍເອົາແລ້ວເພີ່ນໄດ້ຂຽນຊື່ບ້ານບ່ອນຈະສົ່ງໄປຕື່ມໃສ່ ແຕ່ຕົ້ນສະບັບເດີມແຕ່ນັ້ນບໍ່ໄດ້ບອກຊື່ໄວ້

## ວ່າດ້ວຍຄວາມມຸ່ງໝາຍ

ການທີ່ທ່ານໂປໂລຂຽນໜັງສືນີ້ ກໍເພື່ອໃຫ້ຄຣິສຕະຈັກທັງຫລາຍຮູ້ສຶກວ່າ:

ກ. ຄຣິສຕະຈັກມີສະພາບຢ່າງໃດໃນອົງພຣະຄຣິດ

ຂ. ພຣະເຈົ້າ ຊົງສັ່ງ ໃຫ້ພວກ ຄຣິສຕະຈັກ ປະພຶດຢ່າງໃດ ໃນອົງພຣະຄຣິດ

ຄ. ຄຣິສຕະຈັກກໍບໍຣິສຸດສຳເຣັດໃນອົງພຣະຄຣິດ

ງ. ໃນອົງພຣະຄຣິດນັ້ນ ຊາວຢິວກັບຊາວຕ່າງປະເທດໄດ້ເປັນຢ່າງດຽວກັນ

(ນີ້ເປັນຄຳສອນທີ່ທ່ານໂປໂລ ຢາກມອບໃຫ້ຄຣິສຕະຈັກໃນເມືອງໂກລິນໂທ ແຕ່ພວກເຂົາຮັບເອົາບໍ່ໄດ້ ເພາະພວກເຂົາຍັງດຳເນີນໄປຕາມຝ່າຍເນື້ອໜັງ ໑ ໂກລິນໂທ ໓:໑-໓)

## ວ່າດ້ວຍເນື້ອຄວາມ

ໜັງສືເອເຟດມີເນື້ອຄວາມຢ່າງດຽວກັນກັບໜັງສືໂກໂລດ ຄືເພິ່ນບອກວ່າ "ຄຣິສຕະຈັກເປັນກາຍຂອງພຣະຄຣິດ ແລະພຣະຄຣິດເປັນຫົວຂອງພຣະກາຍນັ້ນ" ຄວາມຈິງແລ້ວທ່ານໂປໂລໄດ້ສອນເຣື່ອງນີ້ແລ້ວ ຄືເພິ່ນສອນໄວ້ໃນໜັງສືໂຣມບົດ ໑໒ ແລະໃນໜັງສື ໑ ໂກລິນໂທບົດ ໑໒ ແຕ່ເພິ່ນໄດ້ສອນຕື່ມອີກໃນໜັງສືເອເຟດ ແລະທ່ານໂປໂລບໍ່ໄດ້ສອນກ່ຽວກັບ ຄວາມເປັນຢູ່ຂອງ ຄຣິສຕຽນໄວ້ ໃນບ່ອນໃດອີກທີ່ຍິ່ງໃຫຍ່ ແລະເລິກເຊິ່ງເທົ່າກັບຄັ້ງນີ້

ໜັງສືນີ້ແບ່ງອອກເປັນສອງພາກໃຫຍ່ ຄືໃນພາກຕົ້ນທ່ານໂປໂລໄດ້ບອກວ່າ ພວກຄຣິສຕຽນນັ້ນມີສະພາບຢ່າງໃດເມື່ອຢູ່ໃນອົງພຣະຄຣິດ ແລະໃນພາກສອງເພິ່ນໄດ້ບອກວ່າ ພວກຄຣິສຕຽນຄວນປະພຶດຢ່າງໃດເມື່ອຢູ່ໃນອົງພຣະຄຣິດ ບົດ ໔–໖

## ຂໍ້ສັງເກດທີ່ມີຢູ່ໃນໜັງສືນີ້

໑. ຄົນຄຣິສຕຽນໄດ້ນັ່ງຢູ່ໃນຟ້າສວັນກັບອົງພຣະຄຣິດ ບົດ ໒:໖

໒. ຄົນຄຣິສຕຽນຕ້ອງປະພຶດຢ່າງເໝາະສົມກັບຄຳເອີ້ນຂອງພຣະເຈົ້າ ບົດ ໔:໒

໓. ຄົນຄຣິສຕຽນຕ້ອງຢືນຕໍ່ສູ້ກັບກົນອຸບາຍຂອງ
ມະຍາມານ — ບົດ ໖:໑໑

## ຄຣິສຕະຈັກຖືກເອີ້ນເປັນຫລາຍປາງຄື

໑. ເປັນໄທເຮືອນຂອງພຣະເຈົ້າ — ບົດ ໒:໑໙
໒. ເປັນພຣະວິຫານບໍຣິສຸດຂອງພຣະເຈົ້າ — ບົດ ໒:໒໑
໓. ເປັນບ່ອນສະຖິດຂອງພຣະເຈົ້າ — ບົດ ໒:໒໒
໔. ເປັນພຣະກາຍຂອງພຣະຄຣິດ — ບົດ ໔:໑໒
໕. ເປັນຄຣິສຕະຈັກທີ່ມີພຣະຄຣິດຈຶ່ງເປັນຫົວ — ບົດ ໕:໒໓
໖. ເປັນເຈົ້າສາວຂອງອົງພຣະຄຣິດ — ບົດ ໕:໒໓

## ການແບ່ງເປັນພາກ

### ພາກທີ ໑ ວ່າດ້ວຍສພາບຂອງຄົນຄຣິສຕຽນ ເມື່ອຢູ່ໃນອົງພຣະຄຣິດ — ບົດ ໑–໓

໑. ການສະແດງຄວາມຄໍານັບ — ບົດ ໑:໑–໒
໒. ຈຶ່ງປະທານພຣະພອນຝ່າຍຈິດວິນຍານ — ບົດ ໑:໓–໑໔
  ກ. ຈຶ່ງຄັດເລືອກໄວ້ດ້ວຍພຣະບິດາ — ບົດ ໑:໓–໖
  ຂ. ຖືກໄຖ່ໄວ້ດ້ວຍພຣະຄຣິດ — ບົດ ໑:໔–໑໒
  ຄ. ຖືກຕີຕາປະທັບໄວ້ດ້ວຍພຣະວິນຍານ — ບົດ ໑:໑໓–໑໔
໓. ຄໍາອ້ອນວອນຂອງທ່ານໂປໂລຄັ້ງທີ ໑ — ບົດ ໑:໑໕–໒໓

໔. ລອດພົ້ນດ້ວຍພຣະຄຸນ ບົດ ໒:໑–໑໐

– ການເປັນຢູ່ຂອງເຮົາໃນເມື່ອກ່ອນ ບົດ ໒:໑–໓

– ການເປັນຢູ່ຂອງເຮົາໃນບັດນີ້ ບົດ ໒:໔–໖

– ການເປັນຢູ່ຂອງເຮົາໃນຕໍ່ໜ້າ ບົດ ໒:໗–໑໐

໕. ເອກກະພາບຂອງຊາວຢິວກັບຊາວ ຕ່າງປະເທດເພາະດ້ວຍອົງພຣະຄຣິດ ບົດ ໒:໑໑–໒໒

ກ. ເວັ້ນຈາກອົງພຣະຄຣິດແລ້ວພວກ ຕ່າງຊາດເປັນຢ່າງໃດ ບົດ ໒:໑໑–໑໒

ຂ. ມີກາຍອັນດຽວກັນ ບົດ ໒:໑໓–໑໗

ຄ. ມີເຮືອນທີ່ສ້າງຂຶ້ນຫລັງດຽວກັນ ບົດ ໒:໑໘–໒໒

໖. ການເປີດເຜີຍຂໍ້ເລິກລັບຂອງ ຄຣິສຕະຈັກ ບົດ ໓:໑–໑໓

໗. ຄຳອ້ອນວອນຂອງທ່ານໂປໂລຄັ້ງທີສອງ ບົດ ໓:໑໔–໒໑


## ພາກທີ ໒ ວ່າດ້ວຍຄວາມປະພຶດຂອງຄົນຄຣິສຕຽນໃນໂລກນີ້ ບົດ ໔–໖


໑. ການປະພຶດຕາມຄວາມເປັນເອກກະພາບ ບົດ ໔:໑–໑໖

໒. ການປະພຶດຕາມທາງໃໝ່ ບົດ ໔:໑໗–໕:໒໑

໓. ການປະພຶດໃນຄອບຄົວ ບົດ ໕:໒໒–໖:໙

ກ. ຣະຫວ່າງຜົວເມັຍ ບົດ ໕:໒໒–໓໓

ຂ. ຣະຫວ່າງລູກກັບພໍ່ ບົດ ໖:໑–໔

ຄ. ຣະຫວ່າງຄົນໃຊ້ກັບນາຍ ບົດ ໖:໕–໙

໔. ການປະພຶດທີ່ເໝືອນການຣົບເສິກ ບົດ ໖:໑໐–໒໐

ກ. ຖືອາວຸດຂອງພຣະເຈົ້າທັງໝົດ ບົດ ໖:໑໐–໑໗

ຂ. ອ້ອນວອນເຖິງຄົນບໍຣິສຸດທັງຫລາຍ ບົດ ໖:໑໘–໒໐

໕. ວ່າດ້ວຍໜ້າທີ່ການຂອງທ່ານຕີຊີໂກກັບຄວາມຄຳນັບ ບົດ ໖:໒໐–໒໔


## ວ່າດ້ວຍຫົວຂໍ້ບົດ


ບົດທີ ໑ ວ່າດ້ວຍຊັບສົມບັດ

ບົດທີ ໒ ວ່າດ້ວຍຄວາມລອດພົ້ນ

ບົດທີ ໓ ວ່າດ້ວຍຂໍ້ເລິກລັບ

ບົດທີ ໔ ວ່າດ້ວຍຄວາມເປັນເອກກະພາບ

ບົດທີ ໕ ວ່າດ້ວຍຄຣິສຕະຈັກ

ບົດທີ ໖ ວ່າດ້ວຍການຣົບເສິກ